ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງສຶກສາທິການ ແລະ ກິລາ 1158

ຫ້ອງການ

ເລກທີ /ຫກ

ມະຄອນຫຼວງວຽງຈັນ, ວັນທີ 20 ມີນາ 2026

# ໜັງສືແຈ້ງເຊີນປະມູນ

1. ຫ້ອງການ ກະຊວງສຶກສາທິການ ແລະ ກິລາ ຂໍເຊີນບັນດາບໍລິສັດທີ່ສົນໃຈ ແລະ ມີຄຸນນະວຸດທິເໝາະສົມ ເຂົ້າຍື່ນຊອງປະມູນການຈັດຊື້ ສໍຂາວ-ສໍສີ ສະໜອງແຈກຢາຍຮອດຫ້ອງການສຶກສາທິການ ແລະ ກິລາເມືອງ/ນະຄອນ 148 ເມືອງ ໃນທົ່ວປະເທດ ໂດຍນໍາໃຊ້ງົບປະມານແຫ່ງລັດ ປະຈໍາປີ 2026 (ພາກ 62) ການຈັດຕັ້ງປະຕິບັດໃຫ້ສໍາເລັດພາຍໃນ 04 ເດືອນ ພາຍຫຼັງເຊັນສັນຍາ (ລາຍລະອຽດຕ່າງໆ ລວມທັງເງື່ອນໄຂການປະມູນໄດ້ຄັດຕິດໃນເອກະສານການປະມູນ);
2. ການປະມູນຈະດໍາເນີນຕາມຂັ້ນຕອນການປະມູນເປີດກ້ວາງທີ່ໄດ້ກໍານົດໄວ້ຢູ່ໃນກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ ສະບັບເລກທີ 30/ສພຊ, ລົງວັນທີ 2 ພະຈິກ 2017 ແລະ ຄໍາແນະນໍາກ່ຽວກັບການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ ສະບັບເລກທີ 0477/ກງ, ລົງວັນທີ 13 ກຸມພາ 2019;
3. ການປະມູນນີ້ ອະນຸຍາດໃຫ້ທຸກໆ ບໍລິສັດທີ່ມີຄຸນນະວຸດທິເໝາະສົມ ທີ່ສົນໃຈ ສາມາດຕິດຕໍ່ພົວພັນ ແລະ ກວດກາເບິ່ງເອກະສານປະມູນໄດ້ທີ່ ສໍານັກພິມສຶກສາ ແລະ ກິລາ, ກະຊວງສຶກສາທິການ ແລະ ກິລາ ຕາມວັນເວລາລັດຖະການ;
4. ເອກະສານປະມູນຄົບຊຸດສາມາດຊື້ໄດ້ທີ່ ສໍານັກພິມສຶກສາ ແລະ ກິລາ ກະຊວງສຶກສາທິການ ແລະ ກິລາ, ເລີ່ມແຕ່ວັນທີ 20 ມີນາ 2026 ເປັນຕົ້ນໄປ, ໃນລາຄາຊຸດລະ 1.000.000 ກີບ (ໜຶ່ງລ້ານກີບ) ຈໍານວນເງິນດັ່ງກ່າວນີ້ ຈະບໍ່ມີການສົ່ງຄືນ ວິທີການຊໍາລະຕ້ອງຈ່າຍເປັນ ເງິນສົດ ຫຼື ເຊັກເງິນສົດ;
5. ຊອງປະມູນຕ້ອງສົ່ງທີ່ຫ້ອງປະຊຸມກະຊວງສຶກສາທິການ ແລະ ກິລາ (ເຂດສີສະເກດ) ເວລາ 9:00ໂມງ ຫຼື ກ່ອນເວລາ 9:00 ໂມງ ຂອງວັນທີ 24.4.2026 ທີ່ກໍານົດເປັນເວລາຊ້າສຸດໃນການຍື່ນຊອງປະມູນ. ຊອງປະມູນທີ່ສົ່ງມາທາງເອເລັກໂຕຼນິກຈະບໍ່ຮັບພິຈາລະນາ, ຊອງປະມູນໃດທີ່ສົ່ງຊ້າກວ່າເວລາທີ່ກໍານົດໄວ້ຈະບໍ່ຮັບເອົາ ແລະ ຈະສົ່ງຄືນໂດຍບໍ່ມີການເປີດຊອງ;
6. ຊອງປະມູນທຸກໆ ຊອງຈະໄດ້ເປີດໃນເວລາ 9:00 ໂມງ ຂອງວັນທີ 24.4.2026ຢູ່ທີ່ຫ້ອງປະຊຸມກະຊວງສຶກສາທິການ ແລະ ກິລາ (ເຂດສີສະເກດ) ໂດຍຊ້ອງໜ້າຄະນະກໍາມະການປະມູນ ແລະ ຕົວແທນຂອງຜູ້ປະມູນທີ່ສົນໃຈເຂົ້າຮ່ວມນໍາ;
7. ທຸກຊອງປະມູນຕ້ອງໄດ້ປະກອບໜັງສືຄໍ້າປະກັນການປະມູນດ້ວຍກຽດ ຫຼື ໜັງສືຄໍ້າປະກັນການປະມູນຈາກທະນາຄານ ຊຶ່ງມູນຄ່າຂອງການຄໍ້າປະກັນບໍ່ໃຫ້ຫຼຸດ 2% (ສອງສ່ວນຮ້ອຍ) ຂອງລາຄາປະມູນມາພ້ອມ;
8. ທີ່ຢູ່ຂ້າງເທິງແມ່ນ ເຖິງ: ສໍານັກພິມສຶກສາ ແລະ ກິລາ, ກະຊວງສຶກສາທິການ ແລະ ກິລາ
ທີ່ຕັ້ງຂອງຫ້ອງການ: ສໍານັກພິມສຶກສາ ແລະ ກິລາ, ກະຊວງສຶກສາທິການ ແລະ ກິລາ, ຖະໜົນລ້ານຊ້າງ
ຕູ້ໄປສະນີ 067 (ເຂດສີສະເກດ) ບ້ານ ຊຽງຍືນ, ເມືອງ ຈັນທະບູລີ ນະຄອນຫຼວງວຽງຈັນ
ໂທລະສັບ: 021 255253; 02022565174

ຫົວໜ້າຫ້ອງການ

ກະຊວງສຶກສາທິການ ແລະ ກິລາ ຫ້ອງການ

ຮສ. ປອ. ຫຼ້າວັນ ວົງຄຳສາ